ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ທັນສະໄໝ ວ່ອງໄວ ໝັ້ນໃ...
MODERN QUICK RELIAB...

...ງານັກງານໃຫຍ່

ເລກທີ: 0561 /ທຄຕລ.2025........
ນະຄອນຫຼວງວຽງຈັນ, ວັນທີ:........26 JUN 2025......

# ໜັງສືແຈ້ງເຊີນ

**ເຖິງ:** ບັນດາບໍລິສັດ ຕົວແທນຈຳໜ່າຍພາຫະນະ ພາຍໃນ ນະຄອນຫຼວງວຽງຈັນ ທີ່ນັບຖື.
**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນ ພາຫະນະ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງເຊີນມາຍັງທ່ານຜູ້ສະໜອງ ທີ່ມີຄວາມສົນໃຈເຂົ້າຮ່ວມປະມູນລາຄາ ພາຫະນະ ເພື່ອນຳໃຊ້ເຂົ້າໃນວຽກງານຂອງ ທຄຕລ. ດັ່ງນັ້ນ, ຈຶ່ງໄດ້ແຈ້ງເຊີນມາຍັງທ່ານເພື່ອຍື່ນຊອງເຂົ້າຮ່ວມປະມູນ ດັ່ງມີລາຍລະອຽດລຸ່ມນີ້:

| ລ/ດ | ລາຍລະອຽດ | ຈຳນວນ |
|---|---|---|
| 1 | **ລົດກະບະ**<br>ລົດກະບະ ຍີ່ຫໍ້ Toyota, 4 ປະຕູ, ລຸ້ນສູງ, ຂັບເຄື່ອນ 4 ລໍ້, ພວງມະໄລຊ້າຍເດີມ, ຄວາມແຮງ 2.000 ຊີຊີ ຂຶ້ນໄປ, ເກຍໂອໂຕ, ສີຂາວມຸກ | 03 ຄັນ |

- **ເງື່ອນໄຂຂອງບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍພາຫະນະ ທີ່ມີຄວາມຕ້ອງການຍື່ນຊອງປະມູນຕ້ອງປະກອບດັ່ງນີ້:**

❖ **ເອກະສານ ຊອງທີ1:**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດກ່ຽວກັບຈຳໜ່າຍພາຫະນະ, ດຳເນີນທຸລະກິດຢ່າງໜ້ອຍ 03 ປີຂຶ້ນໄປ, ພ້ອມທັງສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນ 3 ປີ (ປີ 2021, 2022, 2023) ແລະ ໃບຢັ້ງຢືນການເປັນຕົວແທນຈຳໜ່າຍ (ຖ້າມີ).
2. ກຳນົດຍື່ນຊອງລາຍລະອຽດສະເປັກລົດ, ການຮັບປະກັນສິນຄ້າ, ປີຜະລິດລົດ, ໄລຍະເວລາໃນການຈັດສົ່ງ ແລະ ຂໍ້ມູນຕ່າງໆ ຕາມ format ທີ່ຕິດຄັດມາພ້ອມນີ້ ແລະ ຍື່ນກ່ອນ **ວັນທີ 03/07/2025 ເວລາ 11:00 ໂມງ** ໂດຍການສົ່ງຟາຍເຂົ້າ E-mail: procurement@bcel.com.la

❖ **ເອກະສານ ຊອງທີ2: (ປິດຊອງ)**

1. ໃບສະເໜີລາຄາໃຫ້ລະບຸລາຄາຫົວໜ່ວຍແຕ່ລະລາຍການ ແລະ ລວມມູນຄ່າອາກອນມູນຄ່າເພີ່ມ ໂດຍລະບຸເປັນ 02 ສະກຸນ: ກີບ ແລະ ໂດລາ.
2. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 10% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານທຸລະກິດພາຍໃນ ສປປ ລາວ **(ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 15/09/2025)** ຫຼື ແຊັກທີ່ວີຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.
3. ໃນວັນອັງຄານ **ວັນທີ 15/07/2025 ເວລາ 9:00 ໂມງ** ແມ່ນມື້ເປີດຊອງປະມູນ ສະນັ້ນຜູ້ສະໜອງທີ່ຜ່ານການຄັດເລືອກຈາກເອກະສານຊອງທີ 1 ຕ້ອງມາຍື່ນຊອງລາຄາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ ຫ້ອງປະຊຸມ ຊັ້ນ 5 ອາຄານ C.

- **<u>ໝາຍເຫດ:</u>** ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງ ຕາມການກຳນົດຂ້າງເທິງ. ການຄັດເລືອກຜູ້ສະໜອງ ແມ່ນຈະໄດ້ຄັດເລືອກຈາກຫຼາຍເງື່ອນໄຂ (ບໍ່ໄດ້ຄັດເລືອກຈາກລາຄາພຽງຢ່າງດຽວ).
- **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**
  - ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຮັບຜິດຊອບຄ່າທຳນຽມໃນການຈົດທະບຽນສັນຍາ.
  - ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ແມ່ນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 10% ຂອງມູນຄ່າທີ່ຊະນະການປະມູນ.
  - ພາຍຫຼັງທີ່ເຊັນສັນຍາແລ້ວ ກໍລະນີຜູ້ສະໜອງບໍ່ສາມາດສະໜອງສິນຄ້າໄດ້ຕາມສະເປັກ ຫຼື ເວລາທີ່ກຳນົດ ທຄຕລ ຈະປັບໄໝ 0,5%ຕໍ່ວັນ ສູງສຸດ 20% ຂອງມູນຄ່າສັນຍາທັງໝົດ.
- **ການຊຳລະຈະຈ່າຍເປັນງວດດຽວ 100 %** ຂອງມູນຄ່າ ພາຍໃນ 30 ວັນລັດຖະການ ພາຍຫຼັງໄດ້ຮັບເຄື່ອງຄົບຖ້ວນ ແລະ ໄດ້ຮັບການຢັ້ງຢືນຈາກພາກສ່ວນກ່ຽວຂ້ອງ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອຳນວຍການ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ນ. ສາຍສະໝອນ ຈັນທະຈັກ

ຕິດຕໍ່: 021 213 200 ຕໍ່ 414

## (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ …………./ທຄຕລ, ລົງວັນທີ …………………..

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ | ໃບອະນຸຍາດດຳເນີນທຸລະກິດ | ໄລຍະເວລາໃນການດຳເນີນທຸລະກິດ | ໃບອະນຸຍາດເປັນຕົວແທນ | ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ | ການຮັບປະກັນສິນຄ້າ | ກຳນົດສົ່ງ (ວັນ) | |
| 1 | ບ/ສ……… | (ເລກທີ/ 02.01.2015 ) | (ເລກທີ/ 02.01.2015 ) | (ເລກທີ/ 02.01.2015) | …. ປີ | (ໃຫ້ລະບຸ) | | …. ປີ | …… | (ຖ້າມີຂອງແຖມແມ່ນໃຫ້ລະບຸເລີຍ ເຊັ່ນ: ປະກັນໄພ, ຕິດຟີມ, ອື່ນໆ…….) |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ............................

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:
ຊື່:
ໂທ: